ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 296 /ລບ
ນະຄອນຫຼວງວຽງຈັນ, ວັນທີ 12.04.2021

# ດຳລັດ
# ວ່າດ້ວຍ ການຄ້າທາງເອເລັກໂຕຣນິກ

- ອີງຕາມກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມກົດໝາຍວ່າດ້ວຍ ທຸລະກຳທາງເອເລັກໂຕຣນິກ ສະບັບເລກທີ 20/ສພຊ, ລົງວັນທີ 07 ທັນວາ 2012;
- ອີງຕາມກົດໝາຍວ່າດ້ວຍ ລາຍເຊັນເອເລັກໂຕຣນິກ ສະບັບເລກທີ 59/ສພຊ, ລົງວັນທີ 12 ທັນວາ 2018;
- ອີງຕາມກົດໝາຍວ່າດ້ວຍ ການປົກປ້ອງຜູ້ຊົມໃຊ້ ສະບັບເລກທີ 02/ສພຊ, ລົງວັນທີ 30 ມິຖຸນາ 2010;
- ອີງຕາມກົດໝາຍວ່າດ້ວຍ ການປົກປ້ອງຂໍ້ມູນທາງເອເລັກໂຕຣນິກ ສະບັບເລກທີ 25/ສພຊ, ລົງວັນທີ 12 ພຶດສະພາ 2017;
- ອີງຕາມໜັງສືສະເໜີ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0073/ອຄ.ກນຄຕ, ລົງວັນທີ 02 ກຸມພາ 2021.

## ລັດຖະບານ ອອກດຳລັດ:

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ການຕິດຕາມ ກວດກາ ວຽກງານການຄ້າທາງເອເລັກໂຕຣນິກ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີການພັດທະນາ, ທັນສະໄໝ, ປອດໄພ ແລະ ເຊື່ອຖືໄດ້ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງລູກຄ້າ ແລະ ຜູ້ຄ້າທາງເອເລັກໂຕຣນິກ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ການຄ້າທາງເອເລັກໂຕຣນິກ**

ການຄ້າທາງເອເລັກໂຕຣນິກ ແມ່ນ ການຊື້ ຂາຍ, ການແລກປ່ຽນ ສິນຄ້າ ຫຼື ການບໍລິການ ລະຫວ່າງ ຜູ້ຄ້າ ແລະ ລູກຄ້າ ໂດຍນຳໃຊ້ຊ່ອງທາງເອເລັກໂຕຣນິກ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ຄ້າ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ດຳເນີນການຂາຍ ສິນຄ້າ ຫຼື ການບໍລິການທາງເອເລັກໂຕຣນິກ;
2. **ລູກຄ້າ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຊື້, ຊົມໃຊ້ ສິນຄ້າ ຫຼື ການບໍລິການ ທາງເອເລັກໂຕຣນິກ;

3. **ຊ່ອງທາງເອເລັກໂຕຣນິກ** ໝາຍເຖິງ ເວັບໄຊ, ໂປຣແກຣມ ຫຼື ຊຸດຄຳສັ່ງອື່ນ ທີ່ນຳໃຊ້ເຂົ້າໃນການດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ;
4. **ເຈົ້າຂອງຊ່ອງທາງການຄ້າທາງເອເລັກໂຕຣນິກ** ໝາຍເຖິງ ຜູ້ຄ້າ, ບຸກຄົນ ຫຼື ນິຕິບຸກຄົນ ທີ່ເປັນເຈົ້າຂອງ ເວັບໄຊ ຫຼື ໂປຣແກຣມການຄ້າທາງເອເລັກໂຕຣນິກ;
5. **ຄຳສັ່ງຊື້ທາງເອເລັກໂຕຣນິກ (Online Ordering Function)** ໝາຍເຖິງ ຄຳສັ່ງທີ່ຖືກຕິດຕັ້ງໃນຊ່ອງທາງການຄ້າທາງເອເລັກໂຕຣນິກ ຫຼື ອຸປະກອນຮັບ ແລະ ສົ່ງຂໍ້ມູນໃດໜຶ່ງ ທີ່ເຊື່ອມຕໍ່ເຂົ້າກັບຊ່ອງທາງການຄ້າທາງເອເລັກໂຕຣນິກ ເພື່ອເຮັດໃຫ້ຜູ້ຊື້ສາມາດລິເລີ່ມສ້າງສັນຍາການຄ້າທາງເອເລັກໂຕຣນິກຕາມເງື່ອນໄຂທີ່ລະບຸໄວ້ໃນຊ່ອງທາງການຄ້າທາງເອເລັກໂຕຣນິກ;
6. **ຕະຫຼາດທາງເອເລັກໂຕຣນິກ (Electronic Marketplace)** ໝາຍເຖິງ ຊ່ອງທາງການຄ້າເອເລັກໂຕຣນິກ ທີ່ ບຸກຄົນ ຫຼື ນິຕິບຸກຄົນ ສ້າງຂຶ້ນ ເພື່ອໃຫ້ບໍລິການ ແກ່ ຜູ້ຊື້ ຂາຍ ສິນຄ້າ ຫຼື ການບໍລິການ ທາງເອເລັກໂຕຣນິກ.

**ມາດຕາ 4 ຫຼັກການກ່ຽວກັບວຽກງານການຄ້າທາງເອເລັກໂຕຣນິກ**

ວຽກງານການຄ້າທາງເອເລັກໂຕຣນິກ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນຄວາມສອດຄ່ອງ ກັບແນວທາງນະໂຍບາຍ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວປະເທດ;
3. ຮັບປະກັນຄວາມວ່ອງໄວ, ທັນສະໄໝ, ສະເໝີພາບ, ຍຸຕິທຳ ແລະ ປອດໄພ;
4. ສອດຄ່ອງ ກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 5 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ກ່ຽວກັບການຄ້າທາງເອເລັກໂຕຣນິກ ຢູ່ ສປປ ລາວ.

## ພາກທີ II
## ຮູບແບບການຄ້າທາງເອເລັກໂຕຣນິກ

**ມາດຕາ 6 ຮູບແບບການຄ້າທາງເອເລັກໂຕຣນິກ**

ການຄ້າທາງເອເລັກໂຕຣນິກ ມີ ສາມ ຮູບແບບ ດັ່ງນີ້:

1. ການຄ້າຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ;
2. ການຄ້າໃນຕະຫຼາດທາງເອເລັກໂຕຣນິກ;
3. ການໃຫ້ບໍລິການຕະຫຼາດທາງເອເລັກໂຕຣນິກ.

**ມາດຕາ 7 ການຄ້າຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ**

ການຄ້າຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ ແມ່ນ ການທີ່ຜູ້ຄ້າ ສ້າງຊ່ອງທາງເອເລັກໂຕຣນິກ ເພື່ອນຳໃຊ້ເຂົ້າໃນການດຳເນີນທຸລະກິດຂອງຕົນ.

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງດຳເນີນການຄ້າທາງເອເລັກໂຕຣນິກໃນຮູບແບບຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ ຕ້ອງແຈ້ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ເພື່ອເກັບກຳຂໍ້ມູນ ແລະ ຕິດຕາມການເຄື່ອນໄຫວ.

ບຸກຄົນ ຫຼື ນິຕິບຸກຄົນ ທີ່ດຳເນີນການຄ້າທາງເອເລັກໂຕຣນິກໃນຮູບແບບຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ ຢູ່ ສປປ ລາວ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍ ວິສາຫະກິດ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 8 ການຄ້າໃນຕະຫຼາດທາງເອເລັກໂຕຣນິກ**

ການຄ້າໃນຕະຫຼາດທາງເອເລັກໂຕຣນິກ ແມ່ນ ການທີ່ຜູ້ຄ້າ ດຳເນີນທຸລະກິດໃນຕະຫຼາດທາງເອເລັກໂຕຣນິກ ໂດຍເສຍຄ່າບໍລິການ ຫຼື ສິ່ງຕອບແທນອື່ນ ແກ່ຜູ້ໃຫ້ບໍລິການຕະຫຼາດທາງເອເລັກໂຕຣນິກ.

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງດຳເນີນທຸລະກິດໃນຕະຫຼາດທາງເອເລັກໂຕຣນິກໃດໜຶ່ງ ຕ້ອງແຈ້ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ເພື່ອເກັບກຳຂໍ້ມູນ ແລະ ຕິດຕາມການເຄື່ອນໄຫວ ແລະ ຕ້ອງປະຕິບັດຕາມລະບຽບຂອງຕະຫຼາດດັ່ງກ່າວ.

ບຸກຄົນ ຫຼື ນິຕິບຸກຄົນ ທີ່ດຳເນີນທຸລະກິດໃນຕະຫຼາດທາງເອເລັກໂຕຣນິກ ຢູ່ ສປປ ລາວ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍ ວິສາຫະກິດ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 9 ການໃຫ້ບໍລິການຕະຫຼາດທາງເອເລັກໂຕຣນິກ**

ການໃຫ້ບໍລິການຕະຫຼາດທາງເອເລັກໂຕຣນິກ ແມ່ນ ການທີ່ຜູ້ດຳເນີນທຸລະກິດ ສ້າງຊ່ອງທາງການຄ້າທາງເອເລັກໂຕຣນິກຂຶ້ນ ເພື່ອໃຫ້ບໍລິການແກ່ຜູ້ຄ້າອື່ນ ດຳເນີນທຸລະກິດໂດຍຮຽກເກັບຄ່າບໍລິການ ຫຼື ສິ່ງຕອບແທນອື່ນ.

ບຸກຄົນ ຫຼື ນິຕິບຸກຄົນ ທີ່ດຳເນີນທຸລະກິດໃຫ້ບໍລິການຕະຫຼາດທາງເອເລັກໂຕຣນິກ ຕ້ອງຂໍອະນຸຍາດຈາກກະຊວງອຸດສາຫະກຳ ແລະ ການຄ້າ ກ່ອນດຳເນີນການເຄື່ອນໄຫວ ແລະ ຕ້ອງແຈ້ງຂໍ້ມູນຜູ້ຄ້າໃນຕະຫຼາດທາງເອເລັກໂຕຣນິກຂອງຕົນ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອເກັບກຳຂໍ້ມູນ ແລະ ຕິດຕາມການເຄື່ອນໄຫວ.

ບຸກຄົນ ຫຼື ນິຕິບຸກຄົນຕ່າງປະເທດ ສາມາດດຳເນີນທຸລະກິດໃຫ້ບໍລິການຕະຫຼາດທາງເອເລັກໂຕຣນິກໃນ ສປປ ລາວ ໄດ້ ແຕ່ສາມາດຖືຮຸ້ນໄດ້ ສູງສຸດບໍ່ເກີນ ເກົ້າສິບ ສ່ວນຮ້ອຍ ແລະ ຕ້ອງມີທຶນຈົດທະບຽນ ແຕ່ສິບຕື້ ກີບ ຂຶ້ນໄປ.

## ພາກທີ III
## ການແຈ້ງ ແລະ ການຂໍອະນຸຍາດ
### ໝວດທີ 1
### ການແຈ້ງການຄ້າທາງເອເລັກໂຕຣນິກ

**ມາດຕາ 10 ການແຈ້ງການຄ້າທາງເອເລັກໂຕຣນິກ**

ການແຈ້ງການຄ້າທາງເອເລັກໂຕຣນິກ ແມ່ນ ການສະໜອງຂໍ້ມູນ ຂອງບຸກຄົນ ຫຼື ນິຕິບຸກຄົນ ທີ່ດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອເກັບກຳຂໍ້ມູນ ແລະ ຕິດຕາມການເຄື່ອນໄຫວ.

ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ດຳເນີນການຄ້າຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ ຫຼື ການຄ້າໃນຕະຫຼາດທາງເອເລັກໂຕຣນິກ ກ່ອນດຳລັດສະບັບນີ້ ຕ້ອງແຈ້ງການດຳເນີນທຸລະກິດ ພາຍໃນ ເກົ້າສິບ ວັນ ນັບແຕ່ວັນທີ່ດຳລັດສະບັບນີ້ມີຜົນບັງຄັບໃຊ້ ເປັນຕົ້ນໄປ. ຖ້າບໍ່ມາແຈ້ງຕາມກຳນົດເວລາດັ່ງກ່າວ ຈະຖືກປະຕິບັດມາດຕະການ ຕາມທີ່ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 11 ເອກະສານປະກອບການແຈ້ງການຄ້າທາງເອເລັກໂຕຣນິກ**

ເອກະສານປະກອບການແຈ້ງການຄ້າທາງເອເລັກໂຕຣນິກ ມີ ດັ່ງນີ້:

ກ. ສຳລັບຫົວໜ່ວຍທຸລະກິດ:

1. ຄຳຮ້ອງ ຕາມແບບພິມຂອງກະຊວງອຸດສາຫະກຳ ແລະ ການຄ້າ;
2. ສຳເນົາໃບທະບຽນວິສາຫະກິດ ຍົກເວັ້ນຫົວໜ່ວຍທຸລະກິດທີ່ບໍ່ຈຳເປັນຕ້ອງຂຶ້ນທະບຽນວິສາຫະກິດ ຕາມກົດໝາຍວ່າດ້ວຍ ວິສາຫະກິດ;
3. ສຳເນົາໃບອະນຸຍາດດຳເນີນທຸລະກິດ ຖ້າເປັນກິດຈະການທີ່ຕ້ອງຂໍອະນຸຍາດ;

4. ສຳເນົາເອກະສານຢັ້ງຢືນການນຳໃຊ້ບໍລິການຊຳລະ ຢູ່ ສປປ ລາວ.

**ຂ. ສຳລັບບຸກຄົນ:**

1. ຄຳຮ້ອງ ຕາມແບບພິມຂອງກະຊວງອຸດສາຫະກຳ ແລະ ການຄ້າ;
2. ສຳເນົາບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ;
3. ໃບຢັ້ງຢືນທີ່ຢູ່;
4. ສຳເນົາເອກະສານຢັ້ງຢືນການນຳໃຊ້ບໍລິການຊຳລະຢູ່ ສປປ ລາວ.

**ມາດຕາ 12 ການຢັ້ງຢືນຮັບຮູ້ການຄ້າທາງເອເລັກໂຕຣນິກ**

ການຢັ້ງຢືນຮັບຮູ້ການຄ້າທາງເອເລັກໂຕຣນິກ ແມ່ນ ການຮັບຮູ້ເປັນທາງການ ໂດຍຂະແໜງການອຸດສາຫະກຳ ແລະ ການຄ້າ ຕໍ່ການດຳເນີນການຄ້າທາງເອເລັກໂຕຣນິກ ຂອງບຸກຄົນ ຫຼື ນິຕິບຸກຄົນ.

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ໄດ້ກຳນົດໃນມາດຕາ 11 ຂອງດຳລັດສະບັບນີ້ ຂະແໜງການອຸດສາຫະກຳ ແລະ ການຄ້າ ຕ້ອງພິຈາລະນາອອກໃບຢັ້ງຢືນຮັບຮູ້ການຄ້າທາງເອເລັກໂຕຣນິກ ພາຍໃນ ສາມ ວັນ ລັດຖະການ.

**ມາດຕາ 13 ການນຳໃຊ້ ແລະ ອາຍຸການນຳໃຊ້ ໃບຢັ້ງຢືນຮັບຮູ້ການຄ້າທາງເອເລັກໂຕຣນິກ**

ການນຳໃຊ້ໃບຢັ້ງຢືນຮັບຮູ້ການຄ້າທາງເອເລັກໂຕຣນິກ ຂອງບຸກຄົນ ຫຼື ນິຕິບຸກຄົນ ຕ້ອງໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມຈຸດປະສົງຂອງການແຈ້ງ ແລະ ບໍ່ສາມາດມອບ, ໂອນ ຫຼື ໃຫ້ບຸກຄົນອື່ນນຳໃຊ້ແທນ.

ໃບຢັ້ງຢືນຮັບຮູ້ການຄ້າທາງເອເລັກໂຕຣນິກ ມີອາຍຸການນຳໃຊ້ ສອງ ປີ ແລະ ສາມາດຕໍ່ອາຍຸການນຳໃຊ້ໄດ້ ຊຶ່ງຜູ້ທີ່ມີຈຸດປະສົງສືບຕໍ່ດຳເນີນທຸລະກິດ ຕ້ອງຍື່ນຄຳຮ້ອງຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຢ່າງໜ້ອຍ ສາມສິບ ວັນ ກ່ອນ ໃບຢັ້ງຢືນໝົດອາຍຸການນຳໃຊ້.

## ໝວດທີ 2
## ການຂໍອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ

**ມາດຕາ 14 ການຂໍອະນຸຍາດດຳເນີນທຸລະກິດ ການຄ້າທາງເອເລັກໂຕຣນິກ**

ການຂໍອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ແມ່ນ ການສະເໜີຂໍສິດໃນການດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ສະເພາະການໃຫ້ບໍລິການຕະຫຼາດທາງເອເລັກໂຕຣນິກ.

ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ດຳເນີນທຸລະກິດໃຫ້ບໍລິການຕະຫຼາດທາງເອເລັກໂຕຣນິກ ກ່ອນດຳລັດສະບັບນີ້ ຕ້ອງຂໍອະນຸຍາດດຳເນີນທຸລະກິດ ພາຍໃນ ເກົ້າສິບ ວັນ ນັບແຕ່ວັນທີ່ດຳລັດສະບັບນີ້ມີຜົນບັງຄັບໃຊ້ເປັນຕົ້ນໄປ. ຖ້າບໍ່ມາຂໍອະນຸຍາດດຳເນີນທຸລະກິດ ຕາມກຳນົດເວລາດັ່ງກ່າວ ຈະຖືກປະຕິບັດມາດຕະການ ຕາມທີ່ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 15 ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ**

ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດ ການຄ້າທາງເອເລັກໂຕຣນິກ ມີດັ່ງນີ້:

1. ຄຳຮ້ອງ ຕາມແບບພິມຂອງກະຊວງອຸດສາຫະກຳ ແລະ ການຄ້າ;
2. ສຳເນົາໃບທະບຽນວິສາຫະກິດ;
3. ແຜນດຳເນີນທຸລະກິດ;
4. ໃບຢັ້ງຢືນມາດຕະຖານດ້ານເຕັກນິກ ຂອງຊ່ອງທາງການຄ້າທາງເອເລັກໂຕຣນິກຈາກກະຊວງເຕັກໂນໂລຊີ ແລະ ການສື່ສານ;
5. ໃບອະນຸຍາດນຳໃຊ້ບໍລິການຊຳລະທາງເອເລັກໂຕຣນິກ ຕາມລະບຽບການສະເພາະທີ່ທະນາຄານແຫ່ງ ສປປ ລາວ ກຳນົດ.

**ມາດຕາ 16 ການພິຈາລະນາອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ**

ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງພິຈາລະນາການຂໍອະນຸຍາດ ດຳເນີນທຸລະກິດໃຫ້ບໍລິການຕະຫຼາດທາງເອເລັກໂຕຣນິກ ແລະ ອອກໃບອະນຸຍາດ ພາຍໃນເວລາ ຫ້າ ວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານປະກອບຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ໃນກໍລະນີປະຕິເສດການຮ້ອງຂໍ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນພາຍໃນກຳນົດເວລາດັ່ງກ່າວ.

ໃນເວລາພິຈາລະນາການຂໍອະນຸຍາດ ດຳເນີນທຸລະກິດໃຫ້ບໍລິການຕະຫຼາດເອເລັກໂຕຣນິກ ຖ້າເຫັນວ່າມີຄວາມຈຳເປັນ ກະຊວງອຸດສາຫະກຳ ແລະ ການຄ້າ ມີສິດທວງເອົາເອກະສານ ແລະ ຂໍ້ມູນເພີ່ມຕື່ມ ຈາກຜູ້ຮ້ອງຂໍ ຫຼື ເຊີນພາກສ່ວນທີ່ກ່ຽວຂ້ອງ ມາປຶກສາຫາລື.

**ມາດຕາ 17 ການນຳໃຊ້ ແລະ ອາຍຸການນຳໃຊ້ ໃບອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ**

ການນຳໃຊ້ໃບອະນຸຍາດ ດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ຂອງບຸກຄົນ ຫຼື ນິຕິບຸກຄົນຕ້ອງໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມຈຸດປະສົງຂອງການຂໍອະນຸຍາດ ແລະ ບໍ່ສາມາດ ມອບ, ໂອນ ຫຼື ໃຫ້ບຸກຄົນອື່ນ ນຳໃຊ້ແທນ.

ໃບອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ມີອາຍຸການນຳໃຊ້ ສາມ ປີ, ສາມາດຕໍ່ອາຍຸການນຳໃຊ້ໄດ້ ຊຶ່ງຜູ້ທີ່ມີຈຸດປະສົງສືບຕໍ່ດຳເນີນທຸລະກິດ ຕ້ອງຍື່ນຄຳຮ້ອງຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ ຢ່າງໜ້ອຍ ສາມສິບ ວັນ ກ່ອນໃບອະນຸຍາດໝົດອາຍຸການນຳໃຊ້.

## ພາກທີ IV
## ສັນຍາການຄ້າທາງເອເລັກໂຕຣນິກ
### ໝວດທີ 1
### ສັນຍາການຄ້າທາງເອເລັກໂຕຣນິກ

**ມາດຕາ 18 ສັນຍາການຄ້າທາງເອເລັກໂຕຣນິກ**

ສັນຍາການຄ້າທາງເອເລັກໂຕຣນິກ ແມ່ນ ການຕົກລົງ ລະຫວ່າງຜູ້ຄ້າ ແລະ ລູກຄ້າ ໃນການຊື້ ຂາຍ, ການແລກປ່ຽນ ສິນຄ້າ ຫຼື ການບໍລິການ ທາງເອເລັກໂຕຣນິກ ຊຶ່ງປະກອບມີ ສອງ ຮູບແບບຕົ້ນຕໍ ດັ່ງນີ້:

1. ສັນຍາການຄ້າທາງເອເລັກໂຕຣນິກຜ່ານລະບົບຄຳສັ່ງຊື້;
2. ສັນຍາການຄ້າທາງເອເລັກໂຕຣນິກຜ່ານສື່ສັງຄົມອອນລາຍ.

**ມາດຕາ 19 ການສະເໜີສ້າງສັນຍາການຄ້າທາງເອເລັກໂຕຣນິກ**

ການສະເໜີສ້າງສັນຍາການຄ້າທາງເອເລັກໂຕຣນິກ ແມ່ນ ການສະແດງເຈດຈຳນົງຂອງລູກຄ້າ ໃນການສັ່ງຊື້ ສິນຄ້າ ຫຼື ການບໍລິການຜ່ານລະບົບຄຳສັ່ງຊື້ທາງເອເລັກໂຕຣນິກ ຫຼື ຜ່ານບັນຊີສື່ສັງຄົມອອນລາຍຂອງຕົນຕາມຂໍ້ມູນ ແລະ ເງື່ອນໄຂທີ່ຜູ້ຄ້າ ກຳນົດໄວ້ໃນຊ່ອງທາງເອເລັກໂຕຣນິກ.

ການສະເໜີສ້າງສັນຍາການຄ້າທາງເອເລັກໂຕຣນິກຂອງລູກຄ້າ ຕ້ອງດຳເນີນໃນຮູບແບບທີ່ເໝາະສົມທີ່ສາມາດນຳມາ ບັນທຶກ, ພິມ ຫຼື ສະແດງ ໃນລະບົບຂໍ້ມູນຂ່າວສານ ຂອງຜູ້ຄ້າ ຫຼື ລູກຄ້າ ໄດ້ໃນພາຍຫຼັງ.

**ມາດຕາ 20 ການຕອບຮັບ ຫຼື ການປະຕິເສດ ການສະເໜີສ້າງສັນຍາການຄ້າທາງເອເລັກໂຕຣນິກ**

ການຕອບຮັບສັນຍາການຄ້າທາງເອເລັກໂຕຣນິກ ແມ່ນ ຜູ້ຄ້າ ຢືນຢັນ ແລະ ຕອບຮັບ ການສະເໜີສ້າງສັນຍາຂອງລູກຄ້າ ຜ່ານລະບົບຄຳສັ່ງຊື້ທາງເອເລັກໂຕຣນິກ ຫຼື ຜ່ານບັນຊີສື່ສັງຄົມອອນລາຍຂອງຕົນ.

ການປະຕິເສດສັນຍາການຄ້າທາງເອເລັກໂຕຣນິກ ແມ່ນ ຜູ້ຄ້າ ບໍ່ຢືນຢັນ ຫຼື ປະຕິເສດ ການສະເໜີສ້າງສັນຍາຂອງລູກຄ້າ ຜ່ານລະບົບຄຳສັ່ງຊື້ທາງເອເລັກໂຕຣນິກ ຫຼື ຜ່ານບັນຊີສື່ສັງຄົມອອນລາຍຂອງຕົນ.

ການຕອບຮັບ ຫຼື ປະຕິເສດ ຕໍ່ຂໍ້ສະເໜີການສ້າງສັນຍາການຄ້າທາງເອເລັກໂຕຣນິກ ຂອງລູກຄ້າຕ້ອງດໍາເນີນໃນຮູບແບບ ທີ່ເໝາະສົມ ທີ່ສາມາດນໍາມາ ບັນທຶກ, ພິມ ແລະ ສະແດງ ໃນລະບົບຂໍ້ມູນຂ່າວສານຂອງຜູ້ຄ້າ ຫຼື ລູກຄ້າໄດ້ໃນພາຍຫຼັງ.

**ມາດຕາ 21 ການສະເໜີສ້າງສັນຍາການຄ້າທາງເອເລັກໂຕຣນິກທີ່ເປັນໂມຄະ**

ການສະເໜີສ້າງສັນຍາການຄ້າທາງເອເລັກໂຕຣນິກ ຈະເປັນໂມຄະໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຜູ້ຄ້າບໍ່ຕອບກັບ ພາຍໃນເວລາ ທີ່ກໍານົດໄວ້ໃນຊ່ອງທາງການຄ້າເອເລັກໂຕຣນິກ. ໃນກໍລະນີບໍ່ໄດ້ກໍານົດເວລາ ການສະເໜີສ້າງສັນຍາຈະເປັນໂມຄະ ພາຍໃນ ສິບສອງ ຊົ່ວໂມງ;
2. ຜູ້ຄ້າປະຕິເສດຂໍ້ສະເໜີສ້າງສັນຍາຂອງລູກຄ້າ;
3. ລູກຄ້າຍົກເລີກການສະເໜີສ້າງສັນຍາຂອງຕົນ ກ່ອນໄດ້ຮັບການຕອບກັບ.

**ມາດຕາ 22 ຜົນສັກສິດຂອງສັນຍາການຄ້າທາງເອເລັກໂຕຣນິກ**

ສັນຍາການຄ້າທາງເອເລັກໂຕຣນິກ ທີ່ສ້າງຜ່ານລະບົບຄໍາສັ່ງຊື້ທາງເອເລັກໂຕຣນິກ ຫຼື ຜ່ານສື່ສັງຄົມອອນລາຍ ຈະມີຜົນສັກສິດກໍຕໍ່ເມື່ອ ຜູ້ຄ້າໄດ້ຕອບຮັບຂໍ້ສະເໜີສ້າງສັນຍາຂອງລູກຄ້າ ຕາມເງື່ອນໄຂ ແລະ ເວລາທີ່ກໍານົດ.

**ມາດຕາ 23 ການປ່ຽນແປງສັນຍາການຄ້າທາງເອເລັກໂຕຣນິກ**

ຄູ່ສັນຍາສາມາດປ່ຽນແປງສັນຍາການຄ້າທາງເອເລັກໂຕຣນິກ ຕາມການຕົກລົງເຫັນດີຂອງຄູ່ສັນຍາ ຊຶ່ງການປ່ຽນແປງນັ້ນ ຈະມີຜົນກໍຕໍ່ເມື່ອຖືກດໍາເນີນຕາມຂັ້ນຕອນ ການສະເໜີ ແລະ ການຕອບຮັບສັນຍາການຄ້າທາງເອເລັກໂຕຣນິກ ຫຼື ວິທີການອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 24 ການສິ້ນສຸດສັນຍາການຄ້າທາງເອເລັກໂຕຣນິກ**

ສັນຍາການຄ້າທາງເອເລັກໂຕຣນິກ ຈະສິ້ນສຸດລົງເມື່ອຄູ່ສັນຍາໄດ້ປະຕິບັດ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ຕາມສັນຍາ ຫຼື ຕາມກໍລະນີອື່ນ ທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 25 ການລະເມີດສັນຍາການຄ້າທາງເອເລັກໂຕຣນິກ**

ການລະເມີດສັນຍາການຄ້າທາງເອເລັກໂຕຣນິກ ແມ່ນ ການບໍ່ປະຕິບັດຕາມສັນຍາ ທັງໝົດ ຫຼື ບາງສ່ວນ ເຊັ່ນ ບໍ່ຖືກຄຸນລັກສະນະຂອງສິນຄ້າ ຫຼື ການບໍລິການ, ບໍ່ປະຕິບັດຕາມເວລາ, ສະຖານທີ່ ທີ່ກໍານົດໄວ້ໃນສັນຍາ ຫຼື ປະຕິເສດການປະຕິບັດສັນຍາ.

ໃນກໍລະນີຄູ່ສັນຍາຝ່າຍໃດໜຶ່ງ ຫາກລະເມີດສັນຍາ ຝ່າຍທີ່ລະເມີດສັນຍານັ້ນ ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍທີ່ເກີດຂຶ້ນ ເວັ້ນເສຍແຕ່ການລະເມີດສັນຍານັ້ນ ຫາກເກີດຂຶ້ນຍ້ອນເຫດສຸດວິໄສ.

## ໝວດທີ 2
## ສັນຍາການຄ້າທາງເອເລັກໂຕຣນິກຜ່ານລະບົບຄໍາສັ່ງຊື້

**ມາດຕາ 26 ສັນຍາການຄ້າທາງເອເລັກໂຕຣນິກຜ່ານລະບົບຄໍາສັ່ງຊື້**

ສັນຍາການຄ້າທາງເອເລັກໂຕຣນິກຜ່ານລະບົບຄໍາສັ່ງຊື້ ແມ່ນ ການຕົກລົງ ລະຫວ່າງຜູ້ຄ້າ ແລະ ລູກຄ້າໃນການຊື້ ຂາຍ, ການແລກປ່ຽນ ສິນຄ້າ ຫຼື ການບໍລິການ ທາງເອເລັກໂຕຣນິກຜ່ານລະບົບຄໍາສັ່ງຊື້ ທີ່ທາງເຈົ້າຂອງຊ່ອງທາງເອເລັກໂຕຣນິກສ້າງຂຶ້ນ.

**ມາດຕາ 27 ເນື້ອໃນຂອງສັນຍາການຄ້າທາງເອເລັກໂຕຣນິກຜ່ານລະບົບຄໍາສັ່ງຊື້**

ສັນຍາການຄ້າທາງເອເລັກໂຕຣນິກຜ່ານລະບົບຄໍາສັ່ງຊື້ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊື່ ຂອງສິນຄ້າ ຫຼື ການບໍລິການ, ຂະໜາດ, ປະເພດ ແລະ ລາຍລະອຽດສໍາຄັນອື່ນ ຕາມສະຫຼາກຂອງສິນຄ້າ ຫຼື ການບໍລິການ;
2. ວິທີການ ແລະ ເວລາໃນການຊໍາລະ, ການນໍາສົ່ງສິນຄ້າ ຫຼື ສະໜອງການບໍລິການ;

3. ລາຄາ ຂອງສິນຄ້າ ຫຼື ການບໍລິການ, ມູນຄ່າລວມ ຂອງການສັ່ງຊື້ສິນຄ້າ ຫຼື ການບໍລິການ;
4. ເງື່ອນໄຂ ຂອງການປ່ຽນແປງ, ລະເມີດ ຫຼື ສິ້ນສຸດ;
5. ເງື່ອນໄຂ, ກຳນົດເວລາ ໃນການສະເໜີ ແລະ ແຈ້ງຕອບການຍົກເລີກສັນຍາ;
6. ຊື່, ທີ່ຢູ່, ເບີໂທ, ອີເມລ ແລະ ຂໍ້ມູນອື່ນ ຂອງລູກຄ້າ.

ຂໍ້ມູນໃນຂໍ້ 1 ທີ່ຕິດພັນກັບຄຸນະພາບ ຂອງສິນຄ້າ ຫຼື ການບໍລິການ ຕ້ອງແມ່ນອັນດຽວກັບຂໍ້ມູນ ທີ່ໄດ້ສະແດງໃນຊ່ອງທາງການຄ້າທາງເອເລັກໂຕຣນິກ ໃນເບື້ອງຕົ້ນ.

ຂໍ້ມູນຂ້າງເທິງ ຕ້ອງສາມາດ ບັນທຶກ, ພິມ ແລະ ສະແດງ ໃນລະບົບຂໍ້ມູນຂ່າວສານທາງເອເລັກໂຕຣນິກຂອງລູກຄ້າ ຊຶ່ງສາມາດເຂົ້າເຖິງໄດ້ໃນພາຍຫຼັງ.

**ມາດຕາ 28 ການທົບທວນ ແລະ ຢືນຢັນການສະເໜີສ້າງສັນຍາການຄ້າທາງເອເລັກໂຕຣນິກຜ່ານລະບົບຄຳສັ່ງຊື້**

ເຈົ້າຂອງຊ່ອງທາງການຄ້າທາງເອເລັກໂຕຣນິກ ຕ້ອງມີກົນໄກໃຫ້ລູກຄ້າ ສາມາດກວດຄືນ, ເພີ່ມເຕີມ, ປັບປຸງ, ຢືນຢັນ ຫຼື ຍົກເລີກ ການສະເໜີສ້າງສັນຍາ ກ່ອນທີ່ລູກຄ້າ ຈະດຳເນີນການສົ່ງຂໍ້ສະເໜີດັ່ງກ່າວ ຜ່ານລະບົບຄຳສັ່ງຊື້ທາງເອເລັກໂຕຣນິກ.

**ມາດຕາ 29 ການຍົກເລີກສັນຍາການຄ້າທາງເອເລັກໂຕຣນິກຜ່ານລະບົບຄຳສັ່ງຊື້**

ເຈົ້າຂອງຊ່ອງທາງການຄ້າທາງເອເລັກໂຕຣນິກ ຕ້ອງມີກົນໄກໃຫ້ລູກຄ້າ ສາມາດແຈ້ງຍົກເລີກສັນຍາ ຜ່ານຊ່ອງທາງເອເລັກໂຕຣນິກ ຫຼື ຊ່ອງທາງອື່ນ ທີ່ສາມາດບັນທຶກ ແລະ ສະແດງຂໍ້ມູນ ກ່ຽວກັບການແຈ້ງຍົກເລີກສັນຍາ.

ຜູ້ຄ້າ ຕ້ອງແຈ້ງຕອບການສະເໜີຍົກເລີກສັນຍາຂອງລູກຄ້າ, ໃນກໍລະນີທີ່ ຜູ້ຄ້າ ບໍ່ແຈ້ງຕອບພາຍໃນເວລາ ຕາມທີ່ກຳນົດໄວ້ໃນສັນຍາ ຫຼື ໃນຊ່ອງທາງການຄ້າເອເລັກໂຕຣນິກ ໃຫ້ຖືວ່າສັນຍານັ້ນຖືກຍົກເລີກ.

ເຈົ້າຂອງຊ່ອງທາງການຄ້າທາງເອເລັກໂຕຣນິກ ຕ້ອງສະແດງຂໍ້ມູນ ຢ່າງຄົບຖ້ວນ, ຈະແຈ້ງ ແລະ ໂປ່ງໃສ ກ່ຽວກັບຂັ້ນຕອນ ແລະ ຂະບວນການໃນການຍົກເລີກສັນຍາ ຊຶ່ງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຜົນສະທ້ອນຂອງການຍົກເລີກສັນຍາ;
2. ວັນ ແລະ ເວລາ ຂອງການຍົກເລີກສັນຍາ ແລະ ວິທີການຊຳລະຄ່າບໍລິການປັບໃໝ.

## ໝວດທີ 3
## ສັນຍາການຄ້າທາງເອເລັກໂຕຣນິກຜ່ານສື່ສັງຄົມອອນລາຍ

**ມາດຕາ 30 ສັນຍາການຄ້າທາງເອເລັກໂຕຣນິກຜ່ານສື່ສັງຄົມອອນລາຍ**

ສັນຍາການຄ້າທາງເອເລັກໂຕຣນິກຜ່ານສື່ສັງຄົມອອນລາຍ ແມ່ນ ສັນຍາທີ່ຜູ້ຄ້າ ແລະ ລູກຄ້າ ໄດ້ມີການສື່ສານ ແລະ ຕົກລົງກັນ ເພື່ອຊື້ ຂາຍ, ແລກປ່ຽນ ສິນຄ້າ ຫຼື ການບໍລິການ ຜ່ານສື່ສັງຄົມອອນລາຍ.

**ມາດຕາ 31 ເນື້ອໃນຂອງສັນຍາການຄ້າທາງເອເລັກໂຕຣນິກຜ່ານສື່ສັງຄົມອອນລາຍ**

ສັນຍາການຄ້າທາງເອເລັກໂຕຣນິກ ຜ່ານສື່ສັງຄົມອອນລາຍ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊື່ຂອງສິນຄ້າ ຫຼື ການບໍລິການ, ຂະໜາດ, ປະເພດ ແລະ ລາຍລະອຽດສຳຄັນອື່ນ ຕາມສະຫຼາກຂອງສິນຄ້າ ຫຼື ການບໍລິການ;
2. ວິທີການ ແລະ ເວລາ ໃນການຊຳລະ, ການນຳສົ່ງສິນຄ້າ ຫຼື ສະໜອງການບໍລິການ;
3. ລາຄາຂອງສິນຄ້າ ຫຼື ການບໍລິການ;
4. ເງື່ອນໄຂຂອງການປ່ຽນແປງ, ລະເມີດ ຫຼື ສິ້ນສຸດ;
5. ເງື່ອນໄຂ, ກຳນົດເວລາໃນການສະເໜີ ແລະ ແຈ້ງຕອບ ການຍົກເລີກສັນຍາ.

ຂໍ້ມູນໃນຂໍ້ 1 ທີ່ຕິດພັນກັບກັບຄຸນນະພາບ ຂອງສິນຄ້າ ຫຼື ການບໍລິການ ຕ້ອງແມ່ນອັນດຽວກັບຂໍ້ມູນທີ່ໄດ້ສະແດງໃນຊ່ອງທາງການຄ້າທາງເອເລັກໂຕຣນິກ ໃນເບື້ອງຕົ້ນ.

ຂໍ້ມູນຂ້າງເທິງ ຈະຕ້ອງສາມາດ ບັນທຶກ, ພິມ ແລະ ສະແດງ ໃນບັນຊີສື່ສັງຄົມອອນລາຍ ຂອງຜູ້ຄ້າ ຫຼື ລູກຄ້າ ຊຶ່ງສາມາດເຂົ້າເຖິງໄດ້ໃນພາຍຫຼັງ.

## ພາກທີ V
## ການສະໜອງ ແລະ ການປົກປ້ອງຂໍ້ມູນ ໃນຊ່ອງທາງການຄ້າທາງເອເລັກໂຕຣນິກ

### ມາດຕາ 32 ການສະໜອງຂໍ້ມູນ

ການສະໜອງຂໍ້ມູນ ແມ່ນ ການສະແດງຂໍ້ມູນຕົວຈິງ ກ່ຽວກັບສິນຄ້າ ຫຼື ການບໍລິການ ແລະ ເງື່ອນໄຂ ຂອງການຊື້ ຂາຍ, ການແລກປ່ຽນ ສິນຄ້າ ຫຼື ການບໍລິການ ໃນຊ່ອງທາງການຄ້າທາງເອເລັກໂຕຣນິກ.

### ມາດຕາ 33 ເນື້ອໃນການສະໜອງຂໍ້ມູນ

ການສະໜອງຂໍ້ມູນ ຕ້ອງຮັບປະກັນ ຄວາມຈະແຈ້ງ, ລະອຽດ, ຄົບຖ້ວນ, ຖືກຕ້ອງ, ທັນກັບເຫດການ, ເຂົ້າໃຈໄດ້ງ່າຍ ແລະ ເຊື່ອຖືໄດ້.

ຜູ້ຄ້າ ຕ້ອງສະໜອງຂໍ້ມູນ ໃນເວລາວາງຈຳໜ່າຍສິນຄ້າ ຫຼື ການບໍລິການ ທີ່ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຂໍ້ມູນ ກ່ຽວກັບຜູ້ດຳເນີນທຸລະກິດ ເປັນຕົ້ນ ຊື່, ທີ່ຢູ່ຖາວອນ, ຂໍ້ມູນຕິດຕໍ່, ໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດດຳເນີນທຸລະກິດ;
2. ຂໍ້ມູນ ກ່ຽວກັບສິນຄ້າ ຫຼື ການບໍລິການ ເປັນຕົ້ນ ຂະໜາດ, ສີ, ຮູບປະພັນ ແລະ ລັກສະນະສະເພາະອື່ນ ໃຫ້ຖືກຕ້ອງຕາມສະຫຼາກ;
3. ຂໍ້ມູນ ກ່ຽວກັບລາຄາ ເປັນຕົ້ນ ລາຄາສິນຄ້າ ຫຼື ການບໍລິການ ຕໍ່ຫົວໜ່ວຍ ຫຼື ຕໍ່ຄັ້ງ ແລະ ຄ່າໃຊ້ຈ່າຍອື່ນທີ່ກ່ຽວຂ້ອງ;
4. ຂໍ້ມູນ ກ່ຽວກັບການຈັດສົ່ງ ເປັນຕົ້ນ ຮູບແບບການຈັດສົ່ງ, ເວລາກຳນົດ ແລະ ມູນຄ່າການຈັດສົ່ງ;
5. ຂໍ້ມູນ ກ່ຽວກັບການຊຳລະ ເປັນຕົ້ນ ຮູບແບບການຊຳລະ ແລະ ໄລຍະເວລາການຊຳລະ;
6. ຂໍ້ມູນ ກ່ຽວກັບຄວາມພໍໃຈຂອງລູກຄ້າ ເປັນຕົ້ນ ເນື້ອໃນ ແລະ ຈຳນວນ ຄຳເຫັນຂອງລູກຄ້າຕໍ່ກັບສິນຄ້າ ແລະ ການບໍລິການ ສຳລັບຜູ້ໃຫ້ບໍລິການຕະຫຼາດທາງເອເລັກໂຕຣນິກ;
7. ຂໍ້ມູນ ກ່ຽວກັບເງື່ອນໄຂ ແລະ ຂໍ້ກຳນົດຂອງທຸລະກຳການຄ້າທາງເອເລັກໂຕຣນິກເປັນຕົ້ນ ແຫຼ່ງທີ່ມາຂອງສິນຄ້າ ຫຼື ການບໍລິການ, ນະໂຍບາຍການສົ່ງຄືນ ແລະ ການຮັບປະກັນສິນຄ້າ ຫຼື ການບໍລິການ.

ການສະໜອງຂໍ້ມູນ ຕ້ອງສາມາດ ເກັບຮັກສາ, ພິມ ແລະ ສະແດງ ໃນລະບົບຂໍ້ມູນຂ່າວສານຂອງລູກຄ້າ ຊຶ່ງສາມາດເຂົ້າເຖິງໄດ້ໃນພາຍຫຼັງ.

### ມາດຕາ 34 ການປົກປ້ອງຂໍ້ມູນ

ການປົກປ້ອງຂໍ້ມູນໃນຊ່ອງທາງການຄ້າທາງເອເລັກໂຕຣນິກ ແມ່ນ ການນຳໃຊ້ວິທີການ ແລະ ມາດຕະການ ເພື່ອປ້ອງກັນບໍ່ໃຫ້ມີການເຂົ້າເຖິງ, ນຳໃຊ້, ເປີດເຜີຍ, ດັດແປງ, ສົ່ງ, ໂອນ ຫຼື ທຳລາຍຂໍ້ມູນສ່ວນບຸກຄົນທີ່ເກັບຮັກສາໄວ້ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງຂໍ້ມູນ ຫຼື ອົງການຄຸ້ມຄອງທີ່ກ່ຽວຂ້ອງ.

ໃນການດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ, ເຈົ້າຂອງຊ່ອງທາງເອເລັກໂຕຣນິກ ສາມາດດຳເນີນການເກັບຮັກສາຂໍ້ມູນຂອງລູກຄ້າ ຫຼື ມອບສິດໃຫ້ບຸກຄົນອື່ນ ຊຶ່ງຕ້ອງປະຕິບັດຕາມກົດໝາຍວ່າດ້ວຍການປົກປ້ອງຂໍ້ມູນເອເລັກໂຕຣນິກ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

## ພາກທີ VI
## ສິດ ແລະ ພັນທະ ຂອງຜູ້ດຳເນີນການຄ້າທາງເອເລັກໂຕຣນິກ
### ໝວດທີ 1
### ສິດ ແລະ ພັນທະ ຂອງຜູ້ຄ້າຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ

**ມາດຕາ 35 ສິດຂອງຜູ້ຄ້າຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ**

ຜູ້ຄ້າຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ ມີສິດ ດັ່ງນີ້:

1. ດຳເນີນການຄ້າຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ;
2. ໄດ້ຮັບຂໍ້ມູນຂ່າວສານທີ່ຈຳເປັນ ໃນການດຳເນີນການຄ້າທາງເອເລັກໂຕຣນິກ;
3. ສະເໜີສ້າງຕັ້ງສະມາຄົມການຄ້າທາງເອເລັກໂຕຣນິກ;
4. ນຳໃຊ້ສິດອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 36 ພັນທະຂອງຜູ້ຄ້າຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ**

ຜູ້ຄ້າຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ ມີພັນທະ ດັ່ງນີ້:

1. ແຈ້ງການຄ້າທາງເອເລັກໂຕຣນິກ ຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ;
2. ສະໜອງຂໍ້ມູນ ກ່ຽວກັບສິນຄ້າ ແລະ ການບໍລິການ ໃຫ້ຄົບຖ້ວນ ແລະ ຖືກຕ້ອງ;
3. ປະຕິບັດຕາມຂໍ້ກຳນົດ ກ່ຽວກັບການປົກປ້ອງຂໍ້ມູນ;
4. ຮັບຜິດຊອບທາງດ້ານກົດໝາຍ ຕໍ່ສິນຄ້າ ຫຼື ການບໍລິການ ທີ່ນຳມາຂາຍ, ແລກປ່ຽນ ຫຼື ສະໜອງການບໍລິການ ໃນຊ່ອງທາງການຄ້າທາງເອເລັກໂຕຣນິກຂອງຕົນ;
5. ສ້າງກົນໄກໃຫ້ລູກຄ້າ ສາມາດຕິຊົມຕໍ່ສິນຄ້າ ຫຼື ການບໍລິການ ແລະ ເປີດເຜີຍຄຳຕິຊົມດັ່ງກ່າວ ຢູ່ໃນຊ່ອງທາງການຄ້າເອເລັກໂຕຣນິກຂອງຕົນ ພ້ອມທັງມີກົນໄກໃຫ້ລູກຄ້າສາມາດກວດກາ, ດັດແກ້ ຫຼື ລຶບລ້າງຄຳເຫັນຂອງຕົນ ໄດ້ທຸກເວລາ;
6. ສະໜອງຂໍ້ມູນ ແລະ ເກັບຮັກສາຂໍ້ມູນ ກ່ຽວກັບການດຳເນີນທຸລະກິດຂອງຕົນ ຕາມກົດໝາຍ ແລະ ລະບຽບການ;
7. ໃຫ້ການຮ່ວມມືກັບອົງການຄຸ້ມຄອງການຄ້າທາງເອເລັກໂຕຣນິກ ກ່ຽວກັບວຽກງານການຄ້າທາງເອເລັກໂຕຣນິກ;
8. ນຳໃຊ້ເຄື່ອງມືການຊຳລະ ຫຼື ສື່ການຊຳລະ ຂອງຜູ້ໃຫ້ບໍລິການຊຳລະ ທີ່ໄດ້ຮັບອະນຸຍາດ ຈາກທະນາຄານແຫ່ງ ສປປ ລາວ ເພື່ອຊຳລະຄ່າສິນຄ້າ ຫຼື ການບໍລິການ;
9. ປະຕິບັດພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.

### ໝວດທີ 2
### ສິດ ແລະ ພັນທະ ຂອງຜູ້ຄ້າໃນຕະຫຼາດທາງເອເລັກໂຕຣນິກ

**ມາດຕາ 37 ສິດຂອງຜູ້ຄ້າໃນຕະຫຼາດທາງເອເລັກໂຕຣນິກ**

ຜູ້ຄ້າໃນຕະຫຼາດທາງເອເລັກໂຕຣນິກ ມີສິດ ດັ່ງນີ້:

1. ດຳເນີນການຄ້າໃນຕະຫຼາດທາງເອເລັກໂຕຣນິກ ຕາມຂອບເຂດທີ່ໄດ້ຮັບອະນຸຍາດ;
2. ໄດ້ຮັບຂໍ້ມູນຂ່າວສານທີ່ຈຳເປັນ ໃນການດຳເນີນການຄ້າໃນຕະຫຼາດທາງເອເລັກໂຕຣນິກ;
3. ສະເໜີສ້າງຕັ້ງສະມາຄົມການຄ້າທາງເອເລັກໂຕຣນິກ;
4. ນຳໃຊ້ສິດອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 38 ພັນທະຂອງຜູ້ຄ້າໃນຕະຫຼາດທາງເອເລັກໂຕຣນິກ**

ຜູ້ຄ້າໃນຕະຫຼາດທາງເອເລັກໂຕຣນິກ ມີພັນທະ ດັ່ງນີ້:

1. ແຈ້ງການຄ້າທາງເອເລັກໂຕຣນິກ ຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ;
2. ຮັບຜິດຊອບທາງດ້ານກົດໝາຍ ຕໍ່ສິນຄ້າ ຫຼື ການບໍລິການ ທີ່ນຳມາຂາຍ, ແລກປ່ຽນ ຫຼື ສະໜອງການບໍລິການ;
3. ສະໜອງຂໍ້ມູນ ກ່ຽວກັບສິນຄ້າ ແລະ ການບໍລິການໃຫ້ຄົບຖ້ວນ ແລະ ຖືກຕ້ອງ;
4. ສະໜອງຂໍ້ມູນການ ດຳເນີນທຸລະກິດ ແລະ ໃຫ້ການຮ່ວມມືກັບອົງການຄຸ້ມຄອງການຄ້າທາງເອເລັກໂຕຣນິກ ກ່ຽວກັບວຽກງານການຄ້າທາງເອເລັກໂຕຣນິກ;
5. ປະຕິບັດພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 3
## ສິດ ແລະ ພັນທະ ຂອງຜູ້ໃຫ້ບໍລິການຕະຫຼາດທາງເອເລັກໂຕຣນິກ

**ມາດຕາ 39 ສິດຂອງຜູ້ໃຫ້ບໍລິການຕະຫຼາດທາງເອເລັກໂຕຣນິກ**

ຜູ້ໃຫ້ບໍລິການຕະຫຼາດທາງເອເລັກໂຕຣນິກ ມີສິດ ດັ່ງນີ້:
1. ໃຫ້ບໍລິການຕະຫຼາດທາງເອເລັກໂຕຣນິກ ຕາມຂອບເຂດທີ່ໄດ້ຮັບອະນຸຍາດ;
2. ໄດ້ຮັບຂໍ້ມູນຂ່າວສານທີ່ຈຳເປັນ ໃນການດຳເນີນທຸລະກິດໃຫ້ບໍລິການຕະຫຼາດ ທາງເອເລັກໂຕຣນິກ;
3. ສະເໜີສ້າງຕັ້ງສະມາຄົມການຄ້າທາງເອເລັກໂຕຣນິກ;
4. ນຳໃຊ້ສິດອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 40 ພັນທະຂອງຜູ້ໃຫ້ບໍລິການຕະຫຼາດທາງເອເລັກໂຕຣນິກ**

ຜູ້ໃຫ້ບໍລິການຕະຫຼາດທາງເອເລັກໂຕຣນິກ ມີພັນທະ ດັ່ງນີ້:
1. ສະແດງຂໍ້ມູນ ໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດ ໄວ້ໃນໜ້າຫຼັກຂອງຊ່ອງທາງການຄ້າທາງເອເລັກໂຕຣນິກ;
2. ກຳນົດ ແລະ ສະແດງເງື່ອນໄຂ ຂອງການບໍລິການຕະຫຼາດທາງເອເລັກໂຕຣນິກ;
3. ເກັບຮັກສາຂໍ້ມູນຂອງຜູ້ຄ້າ ໃນຕະຫຼາດທາງເອເລັກໂຕຣນິກ;
4. ສ້າງກົນໄກໃຫ້ຜູ້ຄ້າ ສາມາດນຳສະເໜີຂໍ້ມູນ ກ່ຽວກັບສິນຄ້າ ຫຼື ການບໍລິການ ພ້ອມທັງກົນໄກກວດສອບ ແລະ ຕິດຕາມ ກວດກາ;
5. ສ້າງກົນໄກໃຫ້ລູກຄ້າ ສາມາດຕິຊົມຕໍ່ກັບສິນຄ້າ ຫຼື ການບໍລິການ ແລະ ເປີດເຜີຍຄຳຕິຊົມດັ່ງກ່າວຢູ່ໃນຊ່ອງທາງເອເລັກໂຕຣນິກຂອງຕົນ ພ້ອມທັງມີກົນໄກໃຫ້ລູກຄ້າ ສາມາດກວດກາ, ດັດແກ້ ຫຼື ລຶບລ້າງຄຳເຫັນຂອງຕົນໄດ້;
6. ສ້າງກົນໄກໃຫ້ຜູ້ຄ້າ ແລະ ລູກຄ້າ ສາມາດດຳເນີນການສ້າງສັນຍາການຄ້າທາງເອເລັກໂຕຣນິກ;
7. ປະຕິບັດຕາມຂໍ້ກຳນົດ ກ່ຽວກັບການປົກປ້ອງຂໍ້ມູນການຄ້າທາງເອເລັກໂຕຣນິກ;
8. ກຳນົດມາດຕະການແກ້ໄຂທີ່ເໝາະສົມ ແລະ ທັນເວລາ ໃນກໍລະນີເກີດມີຂໍ້ຂັດແຍ່ງ ຫຼື ມີການລະເມີດກົດໝາຍ ຢູ່ໃນຕະຫຼາດທາງເອເລັກໂຕຣນິກຂອງຕົນ;
9. ສະໜອງຂໍ້ມູນ ແລະ ເກັບຮັກສາຂໍ້ມູນ ກ່ຽວກັບການດຳເນີນທຸລະກິດຂອງຕົນ ຕາມກົດໝາຍ ແລະ ລະບຽບການ;
10. ໃຫ້ການຮ່ວມມືກັບອົງການຄຸ້ມຄອງການຄ້າທາງເອເລັກໂຕຣນິກ ກ່ຽວກັບວຽກງານການຄ້າທາງເອເລັກໂຕຣນິກ;
11. ນຳໃຊ້ເຄື່ອງມືການຊຳລະ ຫຼື ສື່ການຊຳລະ ຂອງຜູ້ໃຫ້ບໍລິການຊຳລະທີ່ໄດ້ຮັບອະນຸຍາດ ຈາກທະນາຄານແຫ່ງ ສປປ ລາວ ເພື່ອຊຳລະຄ່າສິນຄ້າ ຫຼື ການບໍລິການ;
12. ນຳໃຊ້ບໍລິການຈັດສົ່ງສິນຄ້າ ຈາກຜູ້ໃຫ້ບໍລິການທີ່ໄດ້ຮັບອະນຸຍາດ ຕາມກົດໝາຍ;
13. ປະຕິບັດພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.

# ພາກທີ VII
# ຂໍ້ຫ້າມ

**ມາດຕາ 41 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ ຫຼື ນິຕິບຸກຄົນ ມີພຶດຕິກໍາ ດັ່ງນີ້:

1. ສ້າງອຸປະສັກກີດຂວາງການປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່ລັດທີ່ກ່ຽວຂ້ອງ ໃນການປະຕິບັດວຽກງານຄຸ້ມຄອງການຄ້າທາງເອເລັກໂຕຣນິກ;
2. ໃຫ້ການຊ່ວຍເຫຼືອ ຫຼື ປົກປ້ອງຜູ້ລະເມີດ;
3. ເປັນສື່ກາງໃນການໃຫ້ ແລະ ຮັບສິນບົນ;
4. ພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 42 ຂໍ້ຫ້າມສໍາລັບຜູ້ດໍາເນີນການຄ້າທາງເອເລັກໂຕຣນິກ**

**ກ. ຜູ້ຄ້າຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ ຫ້າມມີພຶດຕິກໍາ ດັ່ງນີ້:**

1. ດໍາເນີນທຸລະກິດ ໂດຍບໍ່ແຈ້ງການຄ້າທາງເອເລັກໂຕຣນິກ ຕາມກໍານົດໄວ້ໃນດໍາລັດສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ດໍາເນີນທຸລະກິດທີ່ບໍ່ສອດຄ່ອງກັບຂອບເຂດທີ່ໄດ້ແຈ້ງ;
3. ດໍາເນີນທຸລະກິດ ຄ້າຂາຍ ສິນຄ້າ ຫຼື ການບໍລິການ ເກືອດຫ້າມ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການ;
4. ດໍາເນີນການລະດົມທຶນ ຜ່ານຊ່ອງທາງການຄ້າທາງເອເລັກໂຕຣນິກ ໂດຍບໍ່ໄດ້ຮັບອະນຸຍາດ;
5. ສະໜອງຂໍ້ມູນ ທີ່ບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ໃນຂັ້ນຕອນແຈ້ງດໍາເນີນທຸລະກິດ;
6. ສະໜອງຂໍ້ມູນ ກ່ຽວກັບສິນຄ້າ ຫຼື ການບໍລິການ ໂດຍບໍ່ສອດຄ່ອງກັບສິນຄ້າ ຫຼື ການບໍລິການຕົວຈິງ;
7. ເກັບກໍາ, ນໍາໃຊ້ ຫຼື ເຜີຍແຜ່ຂໍ້ມູນຂອງລູກຄ້າ ໂດຍບໍ່ໄດ້ຮັບອະນຸຍາດ;
8. ສົ່ງຂໍ້ຄວາມທີ່ເປັນການໂຄສະນາ ສິນຄ້າ ຫຼື ການບໍລິການຂອງຕົນ ເກີນຂອບເຂດທີ່ກໍານົດ;
9. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ຂ. ຜູ້ຄ້າໃນຕະຫຼາດທາງເອເລັກໂຕຣນິກ ຫ້າມມີພຶດຕິກໍາ ດັ່ງນີ້:**

1. ດໍາເນີນທຸລະກິດ ໂດຍບໍ່ໄດ້ແຈ້ງການຄ້າທາງເອເລັກໂຕຣນິກ ຕາມກໍານົດໄວ້ໃນດໍາລັດສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ດໍາເນີນທຸລະກິດ ທີ່ບໍ່ສອດຄ່ອງກັບຂອບເຂດ ທີ່ກໍານົດໄວ້ໃນໃບອະນຸຍາດດໍາເນີນທຸລະກິດ;
3. ດໍາເນີນທຸລະກິດ ຄ້າຂາຍສິນຄ້າ ຫຼື ການບໍລິການ ເກືອດຫ້າມ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການ;
4. ສະໜອງຂໍ້ມູນ ທີ່ບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ໃນຂັ້ນຕອນການຂໍອະນຸຍາດດໍາເນີນທຸລະກິດ;
5. ສະໜອງຂໍ້ມູນ ກ່ຽວກັບສິນຄ້າ ຫຼື ການບໍລິການ ໂດຍບໍ່ສອດຄ່ອງກັບສິນຄ້າ ຫຼື ການບໍລິການຕົວຈິງ;
6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ຄ. ຜູ້ໃຫ້ບໍລິການຕະຫຼາດທາງເອເລັກໂຕຣນິກ ຫ້າມມີພຶດຕິກໍາ ດັ່ງນີ້:**

1. ດໍາເນີນທຸລະກິດໂດຍບໍ່ໄດ້ຮັບອະນຸຍາດ ຕາມລະບຽບການ;
2. ດໍາເນີນທຸລະກິດ ທີ່ບໍ່ສອດຄ່ອງກັບຂອບເຂດ ທີ່ກໍານົດໄວ້ໃນໃບອະນຸຍາດດໍາເນີນທຸລະກິດ;
3. ອະນຸຍາດ ຫຼື ເມີນເສີຍ ໃຫ້ມີການຄ້າຂາຍ ສິນຄ້າ ຫຼື ການບໍລິການ ເກືອດຫ້າມ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການ;

4. ດຳເນີນການລະດົມທຶນ ຜ່ານຊ່ອງທາງການຄ້າທາງເອເລັກໂຕຣນິກ ໂດຍບໍ່ໄດ້ຮັບອະນຸຍາດ;
5. ສະໜອງຂໍ້ມູນ ທີ່ບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ໃນຂັ້ນຕອນການຂໍອະນຸຍາດດຳເນີນທຸລະກິດ;
6. ເກັບກຳ, ນຳໃຊ້ ຫຼື ເຜີຍແຜ່ ຂໍ້ມູນຂອງລູກຄ້າ ໂດຍບໍ່ໄດ້ຮັບອະນຸຍາດ;
7. ສົ່ງຂໍ້ຄວາມທີ່ເປັນການໂຄສະນາສິນຄ້າ ຫຼື ການບໍລິການຂອງຕົນ ເກີນຂອບເຂດທີ່ກຳນົດ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 43 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານ**

ຫ້າມ ເຈົ້າໜ້າທີ່ ແລະ ພະນັກງານ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ອຳນາດ, ຕຳແໜ່ງ ຫຼື ໜ້າທີ່ ເພື່ອຮຽກຮ້ອງເອົາຜົນປະໂຫຍດ;
2. ບັງຄັບ, ນາບຂູ່ ຫຼື ໃຊ້ຄວາມຮຸນແຮງ ຕໍ່ຜູ້ດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ;
3. ກົດໜ່ວງຖ່ວງດຶງ ຫຼື ແກ່ຍາວເວລາ ໃນການພິຈາລະນາເອກະສານ;
4. ປະລະໜ້າທີ່, ຂາດຄວາມຮັບຜິດຊອບ ຫຼື ບິດເບືອນຄວາມຈິງ;
5. ປິດບັງ, ປົກປ້ອງ ຫຼື ໃຫ້ຄວາມຮ່ວມມືແກ່ຜູ້ກະທຳຄວາມຜິດ;
6. ປອມແປງເອກະສານ ຫຼື ໃຊ້ເອກະສານປອມແປງ, ເປີດເຜີຍຄວາມລັບທຸລະກິດ ໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ດຳເນີນທຸລະກິດທີ່ກ່ຽວຂ້ອງ;
7. ອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ໂດຍບໍ່ຖືກຕ້ອງ ຕາມເງື່ອນໄຂ ແລະ ຂັ້ນຕອນ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ພາກທີ VIII
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 44 ຮູບການແກ້ໄຂຂໍ້ຂັດແຍ່ງ**

ເມື່ອເກີດມີຂໍ້ຂັດແຍ່ງ ກ່ຽວກັບການດຳເນີນທຸລະກຳການຄ້າທາງເອເລັກໂຕຣນິກ ຄູ່ກໍລະນີສາມາດແກ້ໄຂດ້ວຍຮູບການ ດັ່ງນີ້:

1. ການແກ້ໄຂຂໍ້ຂັດແຍ່ງດ້ວຍການປະນີປະນອມ;
2. ການແກ້ໄຂຂໍ້ຂັດແຍ່ງທາງບໍລິຫານ;
3. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການແກ້ໄຂໂດຍສານປະຊາຊົນ;
5. ການແກ້ໄຂຂໍ້ຂັດແຍ່ງສາກົນ.

**ມາດຕາ 45 ການແກ້ໄຂຂໍ້ຂັດແຍ່ງດ້ວຍການປະນີປະນອມ**

ໃນກໍລະນີມີຂໍ້ຂັດແຍ່ງກ່ຽວກັບການຄ້າທາງເອເລັກໂຕຣນິກ ຄູ່ກໍລະນີ ສາມາດແກ້ໄຂຂໍ້ຂັດແຍ່ງດ້ວຍການປຶກສາຫາລື ແລະ ປະນີປະນອມກັນ ເພື່ອໃຫ້ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ໂດຍປະຕິບັດຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 46 ການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ**

ໃນກໍລະນີມີຂໍ້ຂັດແຍ່ງ ກ່ຽວກັບການຄ້າທາງເອເລັກໂຕຣນິກ ທີ່ມີລັກສະນະທາງດ້ານບໍລິຫານ ຊຶ່ງຢູ່ພາຍໃຕ້ຄວາມຮັບຜິດຊອບ ຂອງອົງການຄຸ້ມຄອງວຽກງານການຄ້າທາງເອເລັກໂຕຣນິກ ຄູ່ກໍລະນີ ມີສິດສະເໜີຕໍ່ອົງການຈັດຕັ້ງດັ່ງກ່າວເພື່ອແກ້ໄຂ.

ຂັ້ນຕອນ ແລະ ຫຼັກການໃນການແກ້ໄຂຂໍ້ຂັດແຍ່ງ ໂດຍອົງການຄຸ້ມຄອງວຽກງານການຄ້າທາງເອເລັກໂຕຣນິກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 47 ການແກ້ໄຂຂໍ້ຂັດແຍ່ງໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີມີຂໍ້ຂັດແຍ່ງທາງດ້ານເສດຖະກິດ ກ່ຽວກັບການຄ້າທາງເອເລັກໂຕຣນິກ ຄູ່ກໍລະນີ ມີສິດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອແກ້ໄຂຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**ມາດຕາ 48 ການແກ້ໄຂຂໍ້ຂັດແຍ່ງໂດຍສານປະຊາຊົນ**

ໃນກໍລະນີມີຂໍ້ຂັດແຍ່ງກ່ຽວກັບການຄ້າທາງເອເລັກໂຕຣນິກ ຄູ່ກໍລະນີສາມາດຮ້ອງຟ້ອງ ຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສີນ ຕາມກົດໝາຍ.

**ມາດຕາ 49 ການແກ້ໄຂຂໍ້ຂັດແຍ່ງສາກົນ**

ໃນກໍລະນີມີຂໍ້ຂັດແຍ່ງ ກ່ຽວກັບການຄ້າທາງເອເລັກໂຕຣນິກ ທີ່ມີລັກສະນະສາກົນ ໃຫ້ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ IX
## ການຄຸ້ມຄອງ ແລະ ການກວດກາ

**ມາດຕາ 50 ອົງການຄຸ້ມຄອງວຽກງານການຄ້າທາງເອເລັກໂຕຣນິກ**

ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ທະນາຄານແຫ່ງ ສປປ ລາວ ແລະ ກະຊວງການເງິນ ເປັນເຈົ້າການຈັດຕັ້ງປະຕິບັດດຳລັດສະບັບນີ້ ໂດຍປະສານສົມທົບກັບ ກະຊວງ, ອົງການລັດທຽບເທົ່າ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານການຄ້າທາງເອເລັກໂຕຣນິກ.

**ມາດຕາ 51 ສິດ ແລະ ໜ້າທີ່ ຂອງກະຊວງອຸດສາຫະກຳ ແລະ ການຄ້າ**

ໃນການຄຸ້ມຄອງວຽກງານການຄ້າທາງເອເລັກໂຕຣນິກ, ກະຊວງອຸດສາຫະກຳ ແລະ ການຄ້າ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ, ນິຕິກຳ ແລະ ມາດຕະການ ກ່ຽວກັບວຽກງານການຄ້າທາງເອເລັກໂຕຣນິກ ເພື່ອນຳສະເໜີລັດຖະບານພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ, ນິຕິກຳ ແລະ ມາດຕະການ ກ່ຽວກັບວຽກງານການຄ້າທາງເອເລັກໂຕຣນິກ ແລະ ຈັດຕັ້ງປະຕິບັດ;
3. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ແຜນພັດທະນາ, ນິຕິກຳ ແລະ ມາດຕະການ ກ່ຽວກັບວຽກງານການຄ້າທາງເອເລັກໂຕຣນິກ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ແລະ ສັງຄົມຊາບ ຢ່າງທົ່ວເຖິງ;
4. ພິຈາລະນາ ອອກໃບອະນຸຍາດດຳເນີນທຸລະກິດ ແລະ ໃບຢັ້ງຢືນຮັບຮູ້, ສັ່ງໂຈະ ຫຼື ຢຸດເຊົາ ການດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ;
5. ພັດທະນາ, ປັບປຸງ ແລະ ບຳລຸງຮັກສາ ລະບົບຖານຂໍ້ມູນການຄ້າທາງເອເລັກໂຕຣນິກ;
6. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີ ກ່ຽວກັບຂໍ້ຂັດແຍ່ງດ້ານການຄ້າທາງເອເລັກໂຕຣນິກ;
7. ຊຸກຍູ້ ແລະ ສົ່ງເສີມ ໃຫ້ມີການນຳໃຊ້ການຄ້າທາງເອເລັກໂຕຣນິກ;
8. ປະສານສົມທົບກັບອົງການທີ່ກ່ຽວຂ້ອງ ໃນການຊຸກຍູ້ໃຫ້ມີການສ້າງຕັ້ງສະມາຄົມການຄ້າທາງເອເລັກໂຕຣນິກ ຢູ່ ສປປ ລາວ;
9. ສັງລວມເກັບກຳສະຖິຕິການຄ້າທາງເອເລັກໂຕຣນິກ;
10. ເປັນຈຸດປະສານງານ, ຮ່ວມມື ແລະ ເຈລະຈາ ວຽກງານການຄ້າທາງເອເລັກໂຕຣນິກກັບຕ່າງປະເທດ;

11. ປະສານສົມທົບ ກັບກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານທີ່ກ່ຽວຂ້ອງ ກັບວຽກງານການຄ້າທາງເອເລັກໂຕຣນິກ;
12. ແບ່ງຄວາມຮັບຜິດຊອບ, ຊີ້ນຳ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານການຄ້າທາງເອເລັກໂຕຣນິກ ຕາມສາຍຕັ້ງຂອງຕົນ ໃນຂອບເຂດທົ່ວປະເທດ;
13. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານການຄ້າທາງເອເລັກໂຕຣນິກ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ;
14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 52 ສິດ ແລະ ໜ້າທີ່ ຂອງ ກະຊວງເຕັກໂນໂລຊີ ແລະ ການສື່ສານ**

ໃນການຄຸ້ມຄອງວຽກງານການຄ້າທາງເອເລັກໂຕຣນິກ, ກະຊວງເຕັກໂນໂລຊີ ແລະ ການສື່ສານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ, ນິຕິກຳ ແລະ ມາດຕະການ ກ່ຽວກັບວຽກງານການຄ້າທາງເອເລັກໂຕຣນິກ ໃນຂອບເຂດພາລະບົດບາດຂອງຕົນ ເພື່ອນຳສະເໜີລັດຖະບານ ພິຈາລະນາ;
2. ຄົ້ນຄວ້າ, ສ້າງນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ, ນິຕິກຳ ແລະ ມາດຕະການ ທີ່ຕິດພັນກັບວຽກງານໄອຊີທີ, ໂທລະຄົມມະນາຄົມ ແລະ ດິຈິຕອນ ເປັນຕົ້ນ ລາຍເຊັນເອເລັກໂຕຣນິກ, ການປົກປ້ອງຂໍ້ມູນເອເລັກໂຕຣນິກ ແລະ ການປ້ອງກັນອາຊະຍາກຳທາງລະບົບຄອມພິວເຕີ ເພື່ອຮັບປະກັນສະພາບແວດລ້ອມທີ່ປອດໄພ ແກ່ການດຳເນີນທຸລະກຳການຄ້າທາງເອເລັກໂຕຣນິກ;
3. ສົ່ງເສີມ ແລະ ພັດທະນາ ຜະລິດຕະພັນ ແລະ ບໍລິການ ທາງດ້ານໄປສະນີ, ໂທລະຄົມມະນາຄົມ ແລະ ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ທີ່ທັນສະໄໝ ເອື້ອອຳນວຍແກ່ການຂະຫຍາຍຕົວຂອງການຄ້າທາງເອເລັກໂຕຣນິກ;
4. ພິຈາລະນາອອກ, ໂຈະ ຫຼື ຖອນ ໃບຢັ້ງຢືນມາດຕະຖານດ້ານເຕັກນິກ ຂອງຊ່ອງທາງການຄ້າທາງເອເລັກໂຕຣນິກ;
5. ປະສານສົມທົບກັບກະຊວງອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ສົ່ງເສີມ, ຊຸກຍູ້ ຫົວໜ່ວຍທຸລະກິດ ຫັນໄປນຳໃຊ້ການຄ້າທາງເອເລັກໂຕຣນິກ;
6. ປະສານສົມທົບກັບກະຊວງອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ພິຈາລະນາ ແກ້ໄຂຂໍ້ຂັດແຍ່ງດ້ານການຄ້າທາງເອເລັກໂຕຣນິກ, ສັງລວມເກັບກຳສະຖິຕິການຄ້າທາງເອເລັກໂຕຣນິກ ແລະ ຈັດຕັ້ງປະຕິບັດວຽກງານຮ່ວມມືກັບຕ່າງປະເທດໃນຂອບການຄ້າທາງເອເລັກໂຕຣນິກ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 53 ສິດ ແລະ ໜ້າທີ່ ຂອງ ທະນາຄານແຫ່ງ ສປປ ລາວ**

ໃນການຄຸ້ມຄອງວຽກງານການຄ້າທາງເອເລັກໂຕຣນິກ, ທະນາຄານແຫ່ງ ສປປ ລາວ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ, ແຜນພັດທະນາ, ນິຕິກຳ ແລະ ມາດຕະການ ກ່ຽວກັບວຽກງານລະບົບການຊຳລະ ຮອງຮັບການຄ້າທາງເອເລັກໂຕຣນິກ ເພື່ອນຳສະເໜີລັດຖະບານພິຈາລະນາ;
2. ສົ່ງເສີມ ແລະ ພັດທະນາ ລະບົບການຊຳລະໃຫ້ທັນສະໄໝ ເພື່ອເອື້ອອຳນວຍແກ່ການຂະຫຍາຍຕົວຂອງການຄ້າທາງເອເລັກໂຕຣນິກ;

3. ສະເໜີກະຊວງອຸດສາຫະກຳ ແລະ ການຄ້າ ໂຈະ ຫຼື ຍົກເລີກ ໃບອະນຸຍາດດຳເນີນທຸລະກິດ ຫຼື ໃບຢັ້ງຢືນຮັບຮູ້ ຂອງຜູ້ຄ້າທີ່ບໍ່ນຳໃຊ້ເຄື່ອງມືການຊຳລະ ຫຼື ສື່ການຊຳລະ ຂອງຜູ້ໃຫ້ບໍລິການຊຳລະ ທີ່ບໍ່ໄດ້ຮັບອະນຸຍາດ ຈາກທະນາຄານແຫ່ງ ສປປ ລາວ ເພື່ອຊຳລະຄ່າສິນຄ້າ ແລະ ການບໍລິການ;
4. ປະສານສົມທົບກັບກະຊວງອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເກັບກຳສະຖິຕິ, ແກ້ໄຂຂໍ້ຂັດແຍ່ງ, ຮ່ວມມືກັບຕ່າງປະເທດ ແລະ ຕິດຕາມກວດກາການເຄື່ອນໄຫວການຊຳລະ ທີ່ໃຫ້ບໍລິການແກ່ການຄ້າທາງເອເລັກໂຕຣນິກ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ ແລະ ກົດໝາຍ.

**ມາດຕາ 54 ສິດ ແລະ ໜ້າທີ່ ຂອງກະຊວງການເງິນ**

ໃນການຄຸ້ມຄອງວຽກງານການຄ້າທາງເອເລັກໂຕຣນິກ, ກະຊວງການເງິນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ, ປັບປຸງ, ຍຸດທະສາດ, ນິຕິກຳ ກ່ຽວກັບວຽກງານການຄ້າທາງເອເລັກໂຕຣນິກ ໃນຂອບເຂດພາລະບົດບາດຂອງຕົນ ເພື່ອສະເໜີລັດຖະບານພິຈາລະນາ;
2. ຜັນຂະຫຍາຍນະໂຍບາຍ, ຍຸດທະສາດ ແລະ ນິຕິກຳ ກ່ຽວກັບວຽກງານການຄ້າເອເລັກໂຕຣນິກ ໃຫ້ກາຍເປັນແຜນການ, ແຜນງານ ຫຼື ໂຄງການ ແລະ ຈັດຕັ້ງປະຕິບັດບົນພື້ນຖານປະສານສົມທົບກັບກະຊວງອຸດສາຫະກຳ ແລະ ການຄ້າ ແລະ ພາກສ່ວນທີ່ກ່ຽວຂ້ອງ;
3. ຄຸ້ມຄອງ, ຕິດຕາມ, ກວດກາ ການປະຕິບັດພັນທະດ້ານພາສີ ແລະ ສ່ວຍສາອາກອນ ຕາມກົດໝາຍ ແລະ ລະບຽບການ;
4. ສະເໜີກະຊວງອຸດສາຫະກຳ ແລະ ການຄ້າ ໂຈະ ຫຼື ຍົກເລີກ ໃບອະນຸຍາດດຳເນີນທຸລະກິດ ຫຼື ໃບຢັ້ງຢືນຮັບຮູ້ ຂອງຜູ້ທີ່ບໍ່ປະຕິບັດພັນທະອາກອນ ຫຼື ພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍກ່ຽວກັບສ່ວຍສາອາກອນ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 55 ສິດ ແລະ ໜ້າທີ່ ຂອງກະຊວງ, ຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ**

ກະຊວງ, ຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ມີສິດ ແລະ ໜ້າທີ່ ໃນການສົ່ງເສີມ, ສະໜັບສະໜູນ, ຄຸ້ມຄອງ, ຕິດຕາມ ແລະ ກວດກາ ວຽກງານການຄ້າທາງເອເລັກໂຕຣນິກ ໂດຍປະສານສົມທົບກັບກະຊວງອຸດສາຫະກຳ ແລະ ການຄ້າ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 56 ເນື້ອໃນກວດກາ**

ການກວດກາການຄຸ້ມຄອງວຽກງານການຄ້າທາງເອເລັກໂຕຣນິກ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານການຄ້າທາງເອເລັກໂຕຣນິກ;
2. ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການຄຸ້ມຄອງວຽກງານຄ້າທາງເອເລັກໂຕຣນິກ;
3. ການເຄື່ອນໄຫວ ຂອງເຈົ້າໜ້າທີ່, ພະນັກງານ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ກັບວຽກງານການຄ້າທາງເອເລັກໂຕຣນິກ.

**ມາດຕາ 57 ຮູບການກວດກາ**

ການກວດກາວຽກງານຄຸ້ມຄອງທຸລະກິດການຄ້າທາງເອເລັກໂຕຣນິກ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາຕາມແຜນການ ແລະ ມີກຳນົດເວລາອັນແນ່ນອນ ຊຶ່ງຕ້ອງປະຕິບັດຢ່າງໜ້ອຍ ສອງ ຄັ້ງ ຕໍ່ປີ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາ ຮູ້ກ່ອນລ່ວງໜ້າ ຢ່າງໜ້ອຍ ຊາວສີ່ ຊົ່ວໂມງ.

ການກວດກາແບບກະທັນຫັນ ແມ່ນ ການກວດກາໃນເວລາທີ່ເຫັນວ່າ ມີຄວາມຈຳເປັນ ແລະ ຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາ ຮູ້ກ່ອນລ່ວງໜ້າ.

ການກວດກາ ໃຫ້ດຳເນີນດ້ວຍການກວດກາ ທາງດ້ານເອກະສານ ແລະ ລົງກວດກາຕົວຈິງ ຢູ່ສະຖານທີ່ກ່ຽວຂ້ອງ.

ການກວດກາ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

## ພາກທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 58 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 59 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກປະຕິບັດມາດຕະການກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

## ພາກທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 60 ການຈັດຕັ້ງປະຕິບັດ**

ມອບໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ທະນາຄານແຫ່ງ ສປປ ລາວ ແລະ ກະຊວງການເງິນ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນດີ.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຕາມພາລະບົດບາດຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 61 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

**ຕາງໜ້າລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

**ພັນຄຳ ວິພາວັນ**